KEOMANY et al. (2023). Souphanouvong University Journal of Multidisciplinary Research and Development. ISSN 2521-0653. Volume 9. Issue 3. Jul - Sep. 2023. Page 194 – 203

# ການປ່ຽນແປງຊີວິດການເປັນຢູ່ ຂອງ ປະຊາຊົນ ບ້ານ ຫ້ວຍໂລ, ຫຼັງມີການກໍ່ສ້າງ ເຂື່ອນໄຟຟ້າ ນ້ຳອູ 1 ເມືອງປາກອູ, ແຂວງຫຼວງພະບາງ

**ຈິດລຳພອນ ແກ້ວມະນີ[1], ໜູພອນ ມະນີວັນ[2], ອານຸສິດ ວັນນະພົນ [2] ແລະ ໄພວັນ ເພັດດອນໂມ[2]**

*ສາຂາ ກະສິກຳ ແລະ ສິ່ງແວດລ້ອມ, ຄະນະກະເສດສາດ ແລະ ຊັບພະຍາກອນປ່າໄມ້, ມະຫາວິທະຍາໄລສຸພານຸວົງ, ສປປ ລາວ*

***[1]ຊື່ຜູ້ຕິດຕໍ່ພົວພັນ:***
*ຈິດລຳພອນ ແກ້ວມະນີ,*
*ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງຫຼວງພະບາງ*
*ເບີໂທ: +856 20 2866 8443,*
*ອີເມວ:*
*Chitlumphonekeomany@gmail.com*
*[2,3,4]ຄະນະກະເສດສາດ ແລະ ຊັບພະຍາກອນປ່າໄມ້ ມະຫາວິທະຍາໄລສຸພານຸວົງ*

***ຂໍ້ມູນບົດຄວາມ:***
*ການສົ່ງບົດ: 07 ມິຖຸນາ 2023*
*ການປັບປຸງ: 27 ກໍລະກົດ 2023*
*ການຕອບຮັບ: 13 ສິງຫາ 2023*

**ບົດຄັດຫຍໍ້**

ການສຶກສາຄົ້ນຄ້ວາໃນຄັ້ງນີ້ ແມ່ນເພື່ອສຶກສາການປ່ຽນແປງຊີວິດການເປັນຢູ່ຂອງປະຊາຊົນ, ບ້ານຫ້ວຍໂລ, ຫຼັງມີການກໍ່ສ້າງເຂື່ອນໄຟຟ້າ ນ້ຳອູ 1 ເມືອງປາກອູ, ແຂວງຫຼວງພະບາງ, ມີຈຸດປະສົງເພື່ອການສຶກສາການປ່ຽນແປງລັກສະນະການປະກອບອາຊີບຂອງປະຊາຊົນ, ສຶກສາເງື່ອນໄຂລັກສະນະຄວາມເພິ່ງພໍໃຈ ຂອງປະຊາຊົນໃນການຈັດສັນ - ຍົກຍ້າຍບ້ານ, ຜູ້ວິໄຈໃຊ້ວິທີການສຳພາດ ໂດຍນຳໃຊ້ແບບຟອມສຳພາດ 100% ຂອງຈຳນວນຄອບຄົວທັງໝົດ ເທົ່າກັບ 134 ຄອບຄົວ 1) ເພື່ອວິເຄາະຂໍ້ມູນສ່ວນຕົວຂອງຜູ້ຕອບແບບສອບຖາມ ແລະ 2) ເພື່ອວິເຄາະລະດັບຄວາມເພິ່ງພໍນຳໃຊ້ ໂປຼແກມ SPSS.

ສະພາບເສດຖະກິດ ແລະ ສັງຄົມ ຂອງປະຊາຊົນ ບ້ານຫ້ວຍໂລ ກ່ອນການຍົກຍ້າຍບ້ານ ແລະ ພາຍຫຼັງມີການຍົກຍ້າຍບ້ານ, ເຮັດໃຫ້ເກີດມີການປ່ຽນແປງໃນຫຼາຍດ້ານຕາມມາ ແລະ ສິ່ງໜຶ່ງ ທີ່ເຮັດໃຫ້ພວກເຮົາຮັບຮູ້ໄດ້ເຖິງການປ່ຽນແປງເຫຼົ່ານີ້ ເຊິ່ງໄດ້ຈາກການສຶກສາວິໄຈ ທາງດ້ານໂຄງສ້າງ ແລະ ໂຄງປະກອບເສດຖະກິດພາຍໃນບ້ານ ລວມທັງຊັບສິນຂອງປະຊາຊົນທີ່ມີຢູ່ໃນບ້ານ. ນອກຈາກນັ້ນ, ຍັງມີການປ່ຽນແປງ ລັກສະນະການນຳໃຊ້ທີ່ດິນທຳການຜະລິດ ຮູບແບບການຜະລິດມີການປ່ຽນແປງໄປຈາກກ່ອນປີ 2016 ແລະ ຫຼັງປີ 2022. ສິ່ງທີ່ເຫັນມີການປ່ຽນແປງຫຼາຍ ແລະ ພົ້ນເດັ່ນ ແມ່ນເນື້ອທີ່ປູກຫຍ້າ ເພື່ອລ້ຽງສັດ ເຊິ່ງແມ່ນປະຊາຊົນໄດ້ຮັບທຶນສົ່ງເສີມຈາກໂຄງການກໍ່ສາງເຂື່ອນໄຟຟ້ານ້ຳອູ ຈຳນວນ 10,000,000 ກີບຕໍ່ຄອບຄົວ. ການປ່ຽນແປງອີກດ້ານໜຶ່ງ ແມ່ນລັກສະນະປະເພດ ເຮືອນຊັ້ນດຽວ, ເຮືອນສອງຊັ້ນ ແລະ ເຮືອນແບບໂມເດີນ ກ່ອນປີ 2016 ແມ່ນບໍ່ມີ ແລະ ປີ 2022 ເຫັນວ່າ ມີການປ່ຽນແປງຫຼາຍຂຶ້ນ ລວມທັງຊັບສິນ ແລະ ເຄື່ອງໃຊ້ໃນຄົວເຮືອນ.

ຄວາມເພິ່ງພໍໃຈ ດ້ານຜົນປະໂຫຍດມີລະດັບຄວາມເພິ່ງພໍໃຈຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍ 3. 70, ຄວາມເພິ່ງພໍໃຈ ດ້ານລະບຽບການມີລະດັບຄວາມເພິ່ງພໍໃຈຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍ 3.64, ຄວາມເພິ່ງພໍໃຈ ດ້ານການອະນຸລັກ ມີລະດັບຄວາມເພິ່ງພໍໃຈຢູ່ໃນລະດັບປານກາງ ມີຄ່າສະເລ່ຍ 3.50 ແລະ 4) ຄວາມເພິ່ງພໍໃຈ ດ້ານພື້ນຖານໂຄງລ່າງ ມີລະດັບຄວາມເພິ່ງພໍໃຈຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍ 3.85.

**ຄຳສຳຄັນ:** *ການກໍ່ສ້າງເຂື່ອນ, ການປ່ຽນແປງລະດັບຊີວິດການເປັນຢູ່ ແລະ ລະດັບຄວາມເພິ່ງພໍໃຈ*

# Changes in Livelihood after Construction of NamOu 1 Hydropower HuayLo Village, PakOu District, Luang Prabang Province

**Chitlumphone KEOMANY[1], Nouphone MANIVANH[2], Anousith VANAPHON[3] and Phaivanh PHETDONMO[4]**

*Agriculture and forest environment program, Faculty of Agriculture and Forest Resource, Souphanouvong University, Lao PDR*

**[1]Correspondence:**
*Chitlumphone KEOMANY, Faculty of Agriculture and Forest Resource, Souphanouvong University. Tel: 0202866 8443, E-mail: Chitlumphonekeomany@gmail.com*
*, [2,3,4]Faculty of Agriculture and Forest Resource, Souphanouvong University*

**Article Info:**
*Submitted: Jun 07, 2023*
*Revised: Jul 27, 2023*
*Accepted: Aug 13, 2023*

## Abstract

This research study Intended to investigate the changes in the living conditions of the people of Huai Lo village after the construction of the NamOu 1 Hydro power in PakOu district, Luang Prabang province, Laos. The study aimed to examine the changes in the nature of people's occupation, the conditions of people's satisfaction with the allocation and relocation of houses, and the water quality after the construction of the dam as a result of the construction of NamOu 1 hydroelectric dam, Pakou district, Luang Prabang province by identifying the research area in HuayLo village, PakOu district, Luang Prabang province, which is a village affected by the construction of NamOu 1 hydroelectric dam, PakOu district, Luang Prabang province. The researcher Used the interview method by using the interview form of 100% of the total number of families equal to 134 families 1) to analyze the General information of the respondents, 2) to analyze the level of dependence using the SPSS program,

The results of the study found Out that after the construction of NamOu 1 hydroelectric dam, PakOu District, Luang Prabang Province The economic and social condition of the people of HuayLo village before the relocation of the village and after the relocation of the village, caused changes in many aspects and the first thing that makes us aware of these changes is from the study and research on the structure and structure of the economy within the village including the property of the people in the village. In addition, there are also changes in the nature of land use for production, production patterns have changed from before 2016 and after 2022. to raise animals, the people received promotion funds from the NamOu Hydropower Project in the amount of 10,000,000 kip per family. Another change is the characteristics of one-story houses, two-story houses and modern houses before 2016 and 2022 will see more changes including property and household appliances.

Satisfaction (1) Benefits have a high level of satisfaction with an average value of 3.70, (2) Regulatory satisfaction has a high level of satisfaction with an average value of 3.64 (3) Conservation satisfaction has a moderate level of satisfaction with an average value of 3.50. (4) Satisfaction with infrastructure has a high level of satisfaction with an average value of 3.85.

**Keyword:** *Dam construction, Chang in Livelihoods and level of satisfaction*

## 1. ພາກສະເໜີ

ໃນແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ຄັ້ງທີ 6 (2006-2010) ເປັນຕົ້ນມາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ສຸມໃສ່ການພັດທະນາພື້ນຖານໂຄງລ່າງ ເປັນຕົ້ນແມ່ນການກໍ່ສ້າງເສັ້ນທາງ, ການກໍ່ສ້າງເຂື່ອນໄຟຟ້າ, ສ້າງໃຫ້ ສປປ ລາວ ກາຍເປັນໝໍ້ໄຟ ແຫ່ງອາຊຽນ, (ກະຊວງພະລັງງານ ແລະ ບໍ່ແຮ່, 2016), ໃນການພັດທະນາປະເທດຊາດ ໃນໄລຍະ 47 ປີ ຜ່ານມາ, ເຂື່ອນໄຟຟ້າ ເປັນໂຄງສ້າງພື້ນຖານຊະນິດໜຶ່ງທີ່ມີໄດ້ກໍ່ສ້າງ ແລະພັດທະນາຢູ່ທຸກພາກຂອງປະເທດນັບແຕ່ ພາກເໜືອ ເຖິງພາກໃຕ້, ການກໍ່ສ້າງເຂື່ອນຢູ່ໃນປະເທດເຮົາ ແມ່ນມີທາງສຽງວິພາກວິຈານ ຈາກອົງກອນຕ່າງໆເຊັ່ນ: ອົງກອນທີ່ບໍ່ຂຶ້ນກັບລັດຖະບານ, ບັນດາປະເທດຕ່າງໆອ້ອມຂ້າງ ຢ່າງຫຼວງຫຼາຍກ່ຽວກັບ ບັນຫາຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ ລວມທັງຜົນກະທົບທາງດ້ານວັດທະນະທຳ ມໍລະດົກໂລກ (ພະແນກຊັບພະຍາກອນ ແລະ ສິ່ງແວດລ້ອມ ແຂວງຫຼວງພະບາງ, 2020), ແຕ່ທິດທາງການພັດທະນາຂອງພັກ ແລະ ລັດແມ່ນມີ ຈຸດມຸ້ງໝາຍໃນການຜະລິດກະແສໄຟຟ້າ ໃຫ້ປະຊາຊົນສາມາດເຂົ້າເຖິງການຊົມໃຊ້ ໃຫ້ໄດ້ 90% (ສະພາແຫ່ງຊາດ, 2021).

ໃນດ້ານເສດຖະກິດ ການມີເຂື່ອນໄຟຟ້າໃນເຂດບ້ານດັ່ງກ່າວນັ້ນ ແມ່ນຖືວ່າ ເປັນຕົວກະຕຸ້ນທາງເສດຖະກິດ (Economic Trigger) ທີ່ມີອິດທິພົນທີ່ສຸດຕໍ່ການປ່ຽນແປງຂອງກິດຈະກຳທາງເສດຖະກິດ ທີ່ເກີດຂຶ້ນໃນຊຸມຊົນ ແລະ ປະຊາຊົນ ທີ່ອາໄສຢູ່ໃກ້ຄຽງ ເບິ່ງພາບລວມຂອງການພັດທະນາຊົນນະບົດ ໃນປະເທດໄທ ແລະ ໄດ້ສະຫຼຸບວ່າ ຈະມີການກໍ່ສ້າງເຂື່ອນ ກໍ່ຈະກະຕຸ້ນໃຫ້ເກີດມີການປຸກສ້າງຢູ່ໃນບໍເວນທີ່ໄດ້ຮັບຜົນກະທົບ, ລາຄາທີ່ດິນໃນບໍລິເວນດັ່ງກ່າວກໍ່ມີຄ່າແພງຂຶ້ນປະມານ 50% ນອກຈາກນັ້ນຍັງກະຕຸ້ນໃຫ້ມີກິດຈະກຳຫຼາຍຢ່າງ ເຊັ່ນ: ເກີດມີການພັດທະນາແຫຼ່ງທ່ອງທ່ຽວ ທາງທຳມະຊາດ, ການສ້າງຕັ້ງຮ້ານອາຫານເຮືອນແພ, ລວມທັງ ທີ່ພັກເຮືອແພ ແລະ ອື່ນໆ (Sompong, 1998)

ເຂື່ອນໄຟຟ້າ ຍັງເປັນສິ່ງສຳຄັນ ແລະ ອິດທິພົນຢ່າງໃຫ່ຍຫຼວງ ຕໍ່ການປ່ຽນແປງ ແລະ ການພັດທະນາການຂອງຄວາມສຳພັນ ລວມທັງບຸກຄົນພາບໃນຊຸມຊົນ ແລະ ພາຍນອກຊຸມຊົນ Angru therton (1990) ສະຫຼຸບວ່າ ການພັດທະນາພື້ນຖານໂຄງລ່າງ ເປັນສາຍເຫດທີ່ເຮັດໃຫ້ ມີການຂະຫຍາຍຄວາມຈະເລີນ ຈາກຕົວເມືອງ ໄປສູ່ຊົນນະບົດ ແລະ ກາຍເປັນເຄື່ອງມືທີ່ສຳຄັນ ໃນການເຊື່ອມໂຍມອິດທິພົນທາງດ້ານ ເສດຖະກິດ,ສັງຄົມ ແລະ ການເຮັດທຸລະກິດລະຫວ່າງກຸ່ມຄົນ.

Angru therton (1990) ໄດ້ມີຂໍ້ສະຫຼຸບຕື່ມວ່າ ການພັດທະນາພື້ນຖານໂຄງລ່າງ ເປັນວິທີການປັບປ່ຽນ ວິຖີການດຳລົງຊີວິດ, ຮີດຄອງປະເພນີ ລວມທັງວັດທະນະທຳ-ສັງຄົມ ຂອງຊຸມຊົນໃນຊົນນະບົດ.

ສາຍນ້ຳ, ແຫຼ່ງນ້ຳ ແລະ ລະບົບນິເວດວິທະຍາທາງນ້ຳ ເປັນຫົວຈັກທາງຊີວະວິທະຍາຂອງໂລກ. ພວກມັນເປັນພື້ນຖານຂອງການມີຊີວິດ ແລະ ການທຳມາຫາກິນສຳລັບຊຸມຊົນທ້ອງຖິ່ນ, ເຂື່ອນໄດ້ຫັນປ່ຽນທັດສະນີຍະພາບ ແລະ ສ້າງຜົນກະທົບທີ່ກັບຄືນບໍ່ໄດ້ອີກ, ການເຂົ້າໃຈ, ປົກປ້ອງ, ແລະ ຟື້ນຟູລະບົບນິເວດວິທະຍາໃນລະດັບອ່າງໂຕ່ງຈຶ່ງຈຳເປັນຢ່າງຍິ່ງເພື່ອຊຸກດັນການພັດທະນາທີ່ມີຄວາມຍຸຕິທຳ ແລະ ຄວາມສຸກສັນຂອງຊີວິດ. ສາຍນ້ຳ ແລະອ່າງໂຕ່ງແມ່ນມີຄວາມສຳຄັນເປັນພິເສດເນື່ອງຈາກວ່າແມ້ແຕ່ການປ່ຽນແປງພຽງເລັກໜ້ອຍໃນການນຳໃຊ້ທີ່ດິນ,ການເປັນມົນລະພິດ ຫຼື ການໄຫຼຂອງນ້ຳກໍສາມາດເກີດຜົນສະທ້ອນທີ່ກ້ວາງໄກໄດ້ (ຄະນະກຳມະທິການເຂື່ອນໂລກ, 2000).

ດັ່ງນັ້ນ, ການສຶກສາຄັ້ງນີ້ ມີຈຸດປະສົງເພື່ອສຶກສາ 1) ສຶກສາການປ່ຽນແປງລັກສະນະການປະກອບອາຊີບຂອງປະຊາຊົນອັນເປັນຜົນມາຈາກ ການສ້າງເຂື່ອນໄຟຟ້າ ນ້ຳອູ 1, ເມືອງປາກອູ, ແຂວງຫຼວງພະບາງ 2) ສຶກສາເງື່ອນໄຂລັກສະນະຄວາມເພິ່ງພໍໃຈຂອງປະຊາຊົນໃນການ ຈັດສັນ-ຍົກຍ້າຍບ້ານ.

## 2. ອຸປະກອນ ແລະ ວິທີການ

### 2.1. ສະຖານທີ່ສຶກສາ

ບ້ານຫ້ວຍໂລ ແມ່ນມີ 3 ຊົນເຜົ່າຄື: ລື້, ຂະມຸ ແລະ ມົ້ງ ເຊິ່ງເລີ່ມສ້າງຕັ້ງຂຶ້ນໃນປີ 2017, ໂຄງການໄດ້ຈັດສັນໃຫ້ປະຊາຊົນຕັ້ງບ້ານເຮືອນຢູ່ລຽບສອງຝັ່ງຫ້ວຍໂລ, ຄວາມສູງຈາກໜ້ານ້ຳທະເລ 320 ຢູ່ຫ່າງຈາກເທດສະບານຕົວນະຄອນຫຼວງພະບາງ ໄປປະມານ 36 ກິໂລແມັດ, ຫ່າງຈາກ

ເທດສະບານເມືອງປາກອູ 6 ກິໂລແມັດ ໄປທາງທິດເໜືອ ເຊິ່ງມີຂອບເຂດຊາຍແດນຕິດກັບບັນດາບ້ານດັ່ງນີ້:




ຮູບທີ 1 ແຜນທີ່ສະຖານທີ່ການສຶກສາ

### 2.2. ວິທີການສຶກສາ

ການເກັບກຳຂໍ້ມູນໃນການສຶກສາຄັ້ງນີ້ ແມ່ນໃຊ້ຮູບແບບການສຶກສາແບບປະສົມປະສານ (Mixed Method Research) ທີ່ຕ້ອງການຂໍ້ມູນທີ່ເປັນແບບຄຸນນະພາບ ແລະ ປະລິມານ ໄດ້ແບ່ງການເກັບກຳຂໍ້ມູນອອກເປັນ 2 ດ້ານຄື: 1) ດ້ານການເກັບກຳຂໍ້ມູນມີສອງຄື: ທົບທວນ ເອກະສານ, ງານວິໄຈທີ່ກ່ຽວຂ້ອງ, ບົດລາຍງານກ່ຽວການປະເມີນຜົນກະທົບສິ່ງແວດລ້ອມ-ສັງຄົມ (EIA), ສຶກສາຂໍ້ມູນທີ່ກ່ຽວຂ້ອງຈາກບັນດາວາລະສານໃນອິນເຕີເນັດ, ຫ້ອງການ ແລະ ຫໍສະໝຸດ, ສ້າງແບບຟອມສຳພາດ ແມ່ນອີງຕາມຕາມຈຸດປະສົງ, ຂອບເຂດການສຶກສາ, ກອບຂອງການວິໄຈ 2) ດ້ານການເກັບກຳຂໍ້ມູນມີໜຶ່ງປະກອບມີ 2 ຕອນຄື: ຕອນທີ 1) ໄດ້ແກ່ການກຳນົດປະຊາກອນເປົ້າໝາຍໄດ້ກຳນົດເອົາຫົວໜ້າຄອບຄົວ ຫຼື ຕົວແທນ ທີ່ສາມາດໃຫ້ຂໍ້ມູນໄດ້ຖືກຕ້ອງ ແລະ ຊັດເຈນ ແລະ ການກຳນົດຂະໜາດຂອງກຸ່ມປະຊາກອນຕົວຢ່າງ ຈາກຈຳນວນຄອບຄົວຂອງປະຊາຊົນ ມີ 134 ຄອບຄົວ ເຊິ່ງຈະໄດ້ສຳພາດ 100 ເປີເຊັນ, ການສ້າງແບບຟອມສຳພາດຈາກແນວຄວາມຄິດທິດສະດີງານວິໄຈທີ່ກ່ຽວຂ້ອງ ແລະ ການລົງສຳຫຼວດພື້ນທີ່ການສຶກສາຕົວຈິງ ໄດ້ສ້າງແບບຟອມສຳພາດ ຈຳນວນ 134 ຟອມ ຈາກນັ້ນດຳເນີນການສຳພາດ ໃນຊ່ວງເດືອນ ພະຈິກຫາ ເດືອນທັນວາ ປີ 2022 ຕາມກຸ່ມປະຊາກອນຕົວຢ່າງຄື: 1) ການສຳພາດອຳນາດການປົກຄອງບ້ານ ເພື່ອສອບຖາມຂໍ້ມູນພື້ນຖານຂອງບ້ານເຊັ່ນວ່າ: ປະຫວັດຄວາມເປັນມາຂອງບ້ານ, ທີ່ຕັ້ງ ແລະ ຂອບເຂດສາຍແດນຂອງບ້ານ, ຈຳນວນພົນລະເມືອງ ແລະ ອາຊີບ, ໂຄງລ່າງພື້ນຖານຂອງບ້ານ 2) ການສຳພາດຄອບຄົວ ໃນການສຶກສາຄັ້ງນີ້ແມ່ນຈະໄດ້ສຳພາດຫົວໜ້າຄອບຄົວ (ຜົວ ຫຼື ເມຍ) ພາຍໃນບ້ານ ໂດຍສະເພາະແມ່ນຈະສອບຖາມຕາມແບບຟອມທີ່ໄດ້ກະກຽມໄວ້.

### 2.3 ການວິເຄາະ

ພາຍຫຼັງສຳເລັດການເກັບກຳຂໍ້ມູນ ໃນພາກສະໜາມ ແລະ ພາກຫ້ອງການແລ້ວ ຈຶ່ງນຳເອົາຂໍ້ມູນທີ່ໄດ້ມາສັງລວມເຂົ້າໂປແກຣມ Microsoft Excel ຈາກນັ້ນນຳຂໍ້ມູນທີ່ໄດ້ມາວິເຄາະໂດຍນຳໃຊ້ໂປຣແກຣມ SPSS ການວິເຄາະຫາຄ່າສະຖິຕິ ພັນລະນາ ( Descriptive) , ເຊິ່ງແມ່ນການວິເຄາະຕາມລັກສະນະຂໍ້ມູນ. ເພື່ອວິເຄາະລະດັບຄວາມເພິ່ງພໍໃຈຂອງປະຊາຊົນຕໍ່ການຍົກຍ້າຍ ແລະ ການປະກອບມາຊີບຂອງປະຊາຊົນ.

ເພື່ອວິເຄາະຂໍ້ມູນສ່ວນຕົວຂອງຜູ້ຕອບແບບສອບຖາມ

ສູດຄິດໄລ່ $P = \frac{f \times 100}{n}$

p: ຄ່າຮ້ອຍລະ

f: ຄ່າຄວາມຖີ່ທີ່ຕ້ອງປ່ຽນເປັນຮ້ອຍລະ

n: ຈຳນວນຄວາມຖີ່ທັງໝົດ

1. ເພື່ອວິເຄາະລະດັບຄວາມເພິ່ງພໍໃຈ

❖ ຄ່າສະເລ່ຍ (Mean)

ສູດຄິດໄລ່ $X = \frac{\sum x}{n}$

$X$: ຄ່າສະເລ່ຍ

$\sum X$: ຜົນລວມຂອງຂໍ້ມູນທັງໝົດ

$n$: ຈຳນວນຕົວຢ່າງ

❖ ຄ່າຜັນປ່ຽນມາດຕະຖານ (**Standard Deviation** )

ສູດຄິດໄລ D$= \sqrt{\frac{\sum(X-X)^2}{n-1}}$

S.D: ຄ່າຜັນປ່ຽນມາດຕະຖານ

$X_i$: ຄະແນນສະເລຍແຕ່ລະໂຕ

n: ຈຳນວນຕົວຢ່າງ

$\sum(X - X)^2$: ຜົນລວມກຳລັງສອງຂອງຜົນຕ່າງລະຫວ່າງຄະແນນແຕ່ລະໂຕກັບຄ່າສະເລ່ຍ

ອີງຕາມຄວາມກວ້າງຂອງລະດັບຊັ້ນທີ່ສະແດງການຄິດໄລສາມາດກຳນົດຄວາມສຳຄັນຂອງຄວາມຄິດເຫັນຕາມຊວງຂອງຄ່າສະເລ່ຍດັ່ງນີ້:

ຄ່າສະເລ່ຍ 4.21-5.00 ແມ່ນລະດັບຄວາມເພິ່ງພໍໃຈຢູ່ໃນລະດັບຫຼາຍທີ່ສຸດ

ຄ່າສະເລ່ຍ 3.41-4.20 ແມ່ນລະດັບຄວາມເພິ່ງພໍໃຈຢູ່ໃນລະດັບຫຼາຍ

ຄ່າສະເລ່ຍ 2.61-3.40 ແມ່ນລະດັບຄວາມເພິ່ງພໍໃຈຢູ່ໃນລະດັບປານກາງ

ຄ່າສະເລ່ຍ 1.81-2.60 ແມ່ນລະດັບຄວາມເພິ່ງພໍໃຈຢູ່ໃນລະດັບໜ້ອຍ

ຄ່າສະເລ່ຍ 1.00-1.80 ແມ່ນລະດັບຄວາມເພິ່ງພໍໃຈຢູ່ໃນລະດັບໜ້ອຍສຸດ

## 3. ຜົນໄດ້ຮັບ

ລັກສະນະການປະກອບອາຊີບຂອງປະຊາຊົນອັນເປັນຜົນມາຈາກການກໍ່ສ້າງເຂື່ອນໄຟຟ້ານ້ຳອູ 1 ສ່ວນໃຫຍ່ແມ່ນມີອາຊີບກະສິກຳ ປີ 2022 ມີຈຳນວນ 115 ຄົນ ກວມເອົາ 85.80%, ທຽບໃສ່ປີ 2016 ມີພຽງ 65 ຄົນ ເທົ່າກັບ 48.71%, ເພີ້ມຂຶ້ນຕື່ມ 56.77%, ຮອງລົງມາແມ່ນອາຊີບພະນັກງານ ມີຈຳນວນ 9 ຄົນ, ກວມເອົາ 6.70% ທຽບໃສ່ປີ 2016 ມີ 4 ຄົນ ເທົ່າກັບ 2.99% ເພີ່ມຂຶ້ນຕື່ມ 44.6%, ອາຊີບຄ້າຂາຍ ມີຈຳນວນ 4 ຄົນ, ກວມເອົາ 3% ທຽບໃສ່ປີ 2016 ມີ 2 ຄົນ ເທົ່າກັບ 1.49% ເພີ່ມຂຶ້ນຕື່ມ 49.6%, ອາຊີບຫັດຖະກຳ ມີຈຳນວນ 3 ຄົນ, ກວມເອົາ 2.20% ທຽບໃສ່ ປີ 2016 ມີ 1 ຄົນ ເທົ່າກັບ 0.75% ເພີ່ມຂຶ້ນຕື່ມ 34%, ອາຊີບຮັບຈ້າງ 3 ຄົນ, ກວມ 2.20% ທຽບໃສ່ປີ 2016 ບໍ່ມີຈັກຄົນ, ເນື້ອທີ່ທຳການຜະລິດຂອງປະຊາຊົນກ່ອນ ໄດ້ມີເນື້ອທີ່ເຮັດໄຮ່ທັງໝົດ 402 ເຮັກຕາ, ເນື້ອທີ່ເຮັດນາທັງໝົດ 9.75 ເຮັກຕາ, ເນື້ອທີ່ເຮັດສວນ 2 ເຮັກຕາ, ເນື້ອທີ່ລ້ຽງສັດ 10 ເຮັກຕາ ແລະ ຫຼັງການຍົກຍ້າຍມີເນື້ອທີ່ເຮັດໄຮ່ທັງໝົດ ມີ 268 ເຮັກຕາ, ເນື້ອທີ່ເຮັດນາທັງໝົດ 9,75 ເຮັກຕາ, ເນື້ອທີ່ເຮັດສ່ວນ 5 ເຮັກຕາ, ເນື້ອທີ່ລ້ຽງສັດ 65 ເຮັກຕາ. ປະເພດເຮືອນເຫັນວ່າ ບໍ່ມີການປ່ຽນແປງ ເນື່ອງຈາກວ່າ ທາງໂຄງ ການໄດ້ໃຫ້ສິດປະຊາຊົນເລືອກເອົາປະເພດເຮືອນ ເຊັ່ນ: ເຮືອນຊັ້ນດຽວກ່ອນປີ 2016 ມີ 90 ຫຼັງ, ແລະ ຫຼັງຈາກປີ 2022 ມີ 87 ຫຼັງ ສ່ວນເຮືອນສອງຊັ້ນ ກ່ອນປີ 2016 ມີ 44 ຫຼັງ ແລະ ຫຼັງຈາກປີ 2022 ມີ 47 ຫຼັງ. ເຄື່ອງໃຊ້ໄຟ ຟ້າ-ອຸປະກອນການສື່ສານຂອງປະຊາຊົນ ກ່ອນປີ 2016 ຊັບສິນ ແລະ ເຄື່ອງໃຊ້ໃນຄົວເຮືອນປະເພດເຄື່ອງໃຊ້ໄຟຟ້າ ເຊັ່ນ: ໂທລະທັດ 80, ພັດລົມ 83, ເຕົາລີດ 79, ໝໍ້ຫຸງເຂົ້າ 77, ໝໍ້ສຸກີ 77 ,ໂທລະທັດ 80, ຕູ້ເຢັນ 73, ໂທລະສັບມືຖື 87.ແຕ່ພາຍຫຼັງມີການຍົກຍ້າຍ 2022, ຊັບສິນ ແລະ ເຄື່ອງໃຊ້ພາຍໃນຄອບ ຄົວເຫັນວ່າມີຈຳນວນເພີ່ມຂຶ້ນ ແລະ ບາງລາຍການທີ່ບໍ່ມີກອນການຍົກຍ້າຍ, ພາຍຫຼັງການຍົກຍ້າຍເຫັນວ່າມີເພີ້ມຂຶ້ນເຊັ່ນ: ພັດລົມ 125,ເຕົາລີດ 98, ໝໍ້ຫຸງເຂົ້າ 110, ໝໍ້ສຸກີ 124, ໂທລະທັດ 134, ຕູ້ເຢັນ 124, ໂທລະສັບມືຖື 235 ໜ່ວຍ. ພາຫະນະ ເພີ່ມຂຶ້ນ ເຊັ່ນ: ລົດໃຫຍ່ ຈາກ 24 ຄັນ ເປັນ 37 ຄັນ, ລົດຈັກ ຈາກ 82 ຄັນ ເພີ່ມຂຶ້ນເປັນ 142 ຄັນ. ໃນຄະນະດຽວກັນ ລົດຖີບໄດ້ຫຼຸດລົງຈາກ 40 ເປັນ 24 ຄັນ, ລົດໄຖນາກໍ່ຫຼຸດລົງ ຈາກ 29 ຄັນ ມາເປັນ 18 ຄັນ. ການລ້ຽງສັດ ກໍ່ເປັນສ່ວນສຳຄັນ ໃນການເພີ່ມລາຍຮັບ ແລະ

ພັກດັນເສດຖະກິດຂອງປະຊາຊົນໃຫ້ດີຂຶ້ນ ປະ ເພດສັດລ້ຽງທີ່ສາມາດຂາຍເປັນສິນຄ້າ ແລະ ນໍາລາຍໄດ້ມາໃຫ້ຄອບຄົວແມ່ນປະເພດ ງົວ-ຄວາຍ, ຄືກ່ອນປີ 2016 ມີ 57 ໂຕ, ຫຼັງປີ 2022 ມີ 254 ໂຕ, ເພີ່ມຂຶ້ນຫຼາຍເທົ່າຕົວ, ໝູ 32ໂຕ, ເພີ່ມຂຶ້ນເປັນ 50 ໂຕ, ສັດປີກ ຈາກ 7,329 ເປັນ 9,820 ໂຕ ແຫຼ່ງ ລາຍ-ຮັບ ຂອງປະຊາຊົນພາຍໃນບ້ານຫ້ວຍໂລ ປີ 2016. ລາຍຮັບ: ຂອງປະຊາຊົນ ໃນປີ 2016 ເປັນຕົ້ນແມ່ນໄດ້ມາຈາກການຜະລິດກະສິກໍາ ກວມເອົາ 49%, ຈາການລ້ຽງສັດ ກວມເອົາ 25%, ຜົນຜະລິດຈາກປ່າໄມ້ ແລະ ເຄື່ອງປ່າຂອງດົງ 12% ແລະ ອື່ນໆ ກວມເອົາ 15%, ລາຍຈ່າຍ ປະຊາຊົນໄດ້ໃຊ້ຈ່າຍສໍາລັບຄ່າອາ ຫານ ແລະ ທັນຍາຫານ 25%, ຮອງລົງມາແມ່ນຄ່າຂົນສົ່ງ, ຄ່າເດີນທາງ 16%, ຄ່າໃຊ້ຈ່າຍສໍາລັບຄົວເຮືອນ 15%, ຄ່າໃຊ້ຈ່າຍການສຶກສາ 13%, ຄ່າໃຊ້ຈ່າຍການຜະລິດ 12%,ຄ້າໃຊ້ຈ່າຍປະເພນີ 9%, ຄ່າໃຊ້ຈ່າຍສຸຂະພາບ 8% ແລະ ຄ່າໃຊ້ຈ່າຍສໍາລັບການຄ້າຂາຍ 2%. ສະແດງແຫຼ່ງ ລາຍຮັບ-ລາຍຈ່າຍຂອງປະຊາຊົນພາຍໃນບ້ານຫ້ວຍໂລປີ (2022) ລາຍຮັບຂອງປະຊາຊົນໄດ້ສ່ວນໃຫ່ຍໄດ້ມາ 1) ຈາກລ້ຽງ ສັດກວມເອົາ 49%, 2) ຈາກປ່າໄມ້ ແລະ ເຄື່ອງປ່າຂອງດົງ 21%, 3) ຈາກການຜະລິດກະສິກໍາ 18% ແລະ ຈາກອື່ນໆ 13%. ລາຍຈ່າຍສ່ວນໃຫ່ຍຂອງປະຊາຊົນ ເປັນຕົ້ນແມ່ນ 1) ປະເພດອາຫານ ແລະ ທັນຍາຫານ 19%, 2) ຄ່າຂົນສົ່ງ 18%, 3) ຈ່າຍຄົວເຮືອນ 17%, 4) ສໍາລັບການສຶກສາ 13%, 5) ຄ່າປະເພນີ 8%, 6) ຄ່າສູກຂະພາບ6%, 7) ຄ້າການຄ້າຂາຍ. ເຫດຜົນທີ່ເຮັດໃຫ້ລາຍຈ່າຍເພີ້ມຂຶ້ນກໍ່ຍ້ອນວ່າມີການພັດທະນາ, ປະຊາຊົນໄດ້ພົບປະຕໍ່ຄົນຂ້າງນອກຫຼາຍຂຶ້ນ, ຈຶ່ງໄດ້ມີການໃຊ້ຈ່າຍຊື້ສິ່ງອໍານວຍຄວາມສະດວກ , ວັດຖຸອຸປະການສື່ສານ, ເຄື່ອງໃຊ້ໄຟຟ້າ ທີ່ທັນສະໄໝ, ການແຕ່ງການ ແລະ ເຄື່ອງນຸ່ງຮົ່ມ, ຈຶ່ງເຮັດໃຫ້ລາຍຈ່າຍເພີ້ມຂຶ້ນ.

ຄວາມເພິ່ງພໍໃຈຂອງປະຊາຊົນຕໍ່ກັບການຍົກຍ້າຍຈັດສັນບ້ານ ດ້ານຜົນປະໂຫຍດ: ມີລະດັບຄວາມເພິ່ງພໍໃຈຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍ 3.70, ມີຄວາມເພິ່ງພໍໃຈການປັບປຸງຊີວິດການເປັນຢູ່ ໃນລະດັບຫຼາຍ ມີຄ່າສະເລ່ຍ 4.11, ພາຍຫຼັງຍົກຍ້າຍມາຢູ່ບ້ານບ້ານໃໝ່ ໄດ້ 2 ປີ ໂຄງການ ໄດ້ໃຫ້ທຶນໃນການຟື້ນຟູອາຊີບ ແຕ່ລະ ຄອບຄົວໄດ້ຮັບທຶນ 10,000,000 ກີບ ເທົ່າກັນ, ໃນນັ້ນມີ ລ້ຽງງົວ, ຂາຍເຄື່ອງຍ່ອຍ, ສ້ອມແປງລົດຈັກ, ຫັດຖະກໍາເຟີນີເຈີ, ເຮັດການບໍລິການຄ້າຂາຍທົ່ວໄປ, ຮອງລົງມາແມ່ນ ການສ້າງອາຊີບ ແລະ ວຽກເຮັດງານທໍາໃຫ້ປະຊາຊົນພາຍໃນບ້ານ ໃນລະດັບຫຼາຍ ມີຄ່າສະເລ່ຍ 3.89, ເນື່ອງຈາກມີການກໍ່ສ້າງເຂື່ອນ, ທາງໜ້າເຂື່ອນມີ ຮ້ານອາຫານເຮືອນແພ, ເຮືອນພັກ ສິ່ງເຫຼົ່ານີ້ ແມ່ນເກີດຂຶ້ນໃໝ່ ເຊິ່ງເຮັດໃຫ້ປະຊາຊົນມີຫຼາກຫຼາຍທາງເລືອກໃນການສ້າງວຽກເຮັດງານທໍາ, ມີການນໍາໃຊ້ໄຟຟ້າ ຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍ 3.68, ທຸກໆຫຼັງຄາເຮືອນມີໄຟຟ້າໃຊ້, ຈາກການສໍາພາດ ແລະ ສັງເກດແຕ່ລະຄອບຄົວມີ ໝໍ້ຫຸງເຂົ້າ, ໝໍ້ໄຟຟ້າ, ຕູ້ເຢັນ ໂທລະທັດ ບາງຄອບຄົວມີເຕົາລີດຜ້າ, ໝໍ້ຕົ້ມນໍ້າຮ້ອນ ເຊິ່ງເຮັດໃຫ້ມີຄ່າໃຊ້ຈ່າຍໄຟຟ້າເພີ້ມຂຶ້ນ ແລະ ມີລາຍຈ່າຍເພີ່ມຂຶ້ນ ຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍ 3.63, ການຊ່ວຍເຫຼືອບູລະນະພື້ນຖານໂຄງລ່າງ ຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍ 3.52, ໂຄງການໄດ້ກໍ່ສ້າງໂຮງຮຽນ, ອານຸບານ,ຫ້ອງການບ້ານ, ເສັ້ນທາງເຂົ້າບ້ານ ມີລາຍຮັບເພີ້ມຂຶ້ນ ຢູ່ໃນລະດັບຫຼາຍ 3.39, ລາຍຮັບຈາການຂາຍສັດລ້ຽງ, ຜົນຜະລິດຈາກການກະສິກໍາ, ຈາກການຄ້າຂາຍມີຄວາມຫຼາກຫຼາຍຂຶ້ນ.

ດ້ານລະບຽບການ: ມີລະດັບຄວາມເພິ່ງພໍໃຈຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍ 3.64, ມີຄວາມເພິ່ງພໍໃຈການປະຕິບັດຕາມຂໍ້ສັນຍາການຮ້ອງຂໍຂອງປະຊາຊົນ ໃນລະດັບຫຼາຍ ມີຄ່າສະເລ່ຍ 3.83, ເນື່ອງຈາກວ່າພາກສ່ວນຮັບຜິດຊອບໄດ້ເອົາໃຈໃສ່ປະຕິບັດຂໍສັນຍາທີ່ກ່ຽວຂ້ອງເພື່ອແນ່ໃສ່ຮັບປະກັນໃຫ້ຖືກຕ້ອງຕາມລະບຽບກົດໝາຍ, ຮອງລົງມາແມ່ນການເປີດເຜີຍຂໍ້ມູນຂ່າວສານໃຫ້ແກ່ສັງຄົມຮັບຮູ້ກ່ອນການເຂົ້າມາສ້າງເຂື່ອນ ໃນລະດັບ ຫຼາຍ ມີຄ່າສະເລ່ຍ 3.79, ພາກສ່ວນຮັບຜິດຊອບໄດ້ເປັນເຈົ້າການເອົາໃຈໃສ່ຢ່າງເຕັມທີ່ໃນການເຜີຍແຜ່ຂໍ້ມູນໃຫ້ພໍ່ແມ່ປະຊາຊົນຮັບຮູ້ກ່ອນການຍົກຍ້າຍ ແລະ ໄດ້ເຮັດຫຼາຍຄັ້ງ , ປະຊາຊົນສາມາດໄປເຮັດວຽກນໍາໂຄງການ ແລະ ໄດ້ຮັບຜົນຕອບແທນຄ່າແຮງງາຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍ 3.70, ເຊິ່ງຊາວໜຸ່ມ ຫຼື ຜູ້ທີ່ບໍ່ມີວຽກເຮັດງານທໍາພາຍໃນບ້ານສາມາດໄປອອກແຮງງານນໍາໂຄງການໄດ້, ການດໍາເນີນການສ້າງເຂື່ອນ

ແລະ ທົດແທນຄ່າເສຍໃຫ້ກັບປະຊາຊົນຖືກຕາມລະບຽບການຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍ 3.67, ຄ່າທົດແທນຄ່າເສຍໄດ້ອີງໃສ່ກົດໝາຍນິຕິກຳຂອງລັດແລະ ໄດ້ຜ່ານຄວາມເຫັນດີ ຈາກປະຊາຊົນ, ໂຄງການໄດ້ເຮັດໃຫ້ເກີດມີບັນຫາຄວາມຂັດແຍ່ງທາງສັງຄົມ ຢູ່ໃນລະດັບປານກາງ ມີຄ່າສະເລ່ຍ 3.22, ເນື່ອງຈາກປະຊາຊົນເຂົ້າໃຈ ແລະ ເຫັນດີນຳການຍົກຍ້າຍຈຶ່ງບໍ່ຄ່ອຍມີຂໍ້ຂັດແຍ່ງ.

ດ້ານການອະນຸລັກ: ມີລະດັບຄວາມເພິ່ງພໍໃຈຢູ່ໃນລະດັບປານກາງ ມີຄ່າສະເລ່ຍ 3.47, ຄວາມເພິ່ງພໍໃຈການກໍ່ສ້າງເຂື່ອນໄດ້ເຮັດໃຫ້ພື້ນທີ່ດິນກະສິກຳ ແລະ ພື້ນທີ່ລ້ຽງສັດຂອງປະຊາຊົນຫຼຸດລົງ ຢູ່ລະດັບປານກາງ ມີຄ່າສະເລ່ຍ 3.50, ເນື່ອຈາກວ່າເຂື່ອນໄຟຟ້ານ້ຳອູ 1 ປະລິມານນ້ຳທີ່ຖ້ວມຢູ່ໃນແລວລ້ອງແມ່ນ້ຳຈຶ່ງບໍ່ມີຜົນກໍ່ພື້ນທີ່ດິນກະສິກຳ ແລະ ພື້ນທີ່ລ້ຽງສັດ , ພື້ນທີ່ອ້ອມຮອບເຂື່ອນແມ່ນໄດ້ເຮັດໃຫ້ສັດນ້ຳ ແລະ ສັດປ່ານາໆຊະນິດຖືກທຳລາຍ ໃນລະດັບປານກາງ ມີຄ່າສະເລ່ຍ 3.49, ການສ້າງເຂື່ອນໄດ້ບຸກເບີກ ແລະ ທຳລາຍພື້ນທີ່ດິນປ່າໄມ້ ໃນລະດັບປານກາງ ມີຄ່າສະເລ່ຍ 3.43 .

ດ້ານພື້ນຖານໂຄງລ່າງ: ມີລະດັບຄວາມເພິ່ງພໍໃຈຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍ 3.85, ມີຄວາມເພິ່ງພໍໃຈສິ່ງອຳນວຍຄວາມສະດວກທາງດ້ານການສຶກສາ ໃນລະດັບຫຼາຍ ມີຄ່າສະເລ່ຍ 3.92, ໂຄງການສ້າງສ້າງໂຮງຮຽນປະຖົມ 1 ຫຼັງ ມີ 5 ຊັ້ນຮຽນ (ປ.1 - ປ.5) ແຕ່ລະຫ້ອງ ສາມາດບັນຈຸ ນັກຮຽນໄດ້ ເຖິງ 50 ຄົນ, ມີຫ້ອງສະພາຄູ 1 ຫ້ອງ, ມີຫ້ອງອະນຸບານ 2 ຫ້ອງ ຄື ອະນຸບານ 1 ແລະ ອະນຸບານ 2 ຮອງລົງມາແມ່ນເສັ້ນທາງ ຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍ 3.91, ບ້ານເກົ່າເສັ້ນທາງເຂົ້າໃນບ້ານ ເປັນທາງດິນແດງ, ທາງຊອຍເຂົ້າຫາເຮືອນຕໍ່ເຮືອນກ້ວາງປະມານ 1 ແມັດ ເຊິ່ງເຮັດໃຫ້ການໄປມາຫາສູ່ກັນຫຍຸ້ງຍາກ, ບາງຫຼັງຄາເຮືອນແມ່ນບໍ່ມີເສັ້ນທາງເຂົ້າຫາກັນເລີຍ, ພາຍຫຼັງມີໂຄງການບ້ານຈັດສັນໄດ້ມີເສັ້ນທາງເຂົ້າຫາບ້ານ ເປັນທາງປູຢາງສອງຊັ້ນ, ທາງຊອຍເຂົ້າຫາເຮືອນແຕ່ລະຫຼັງຄາແມ່ນມີທາງເຂົ້າກັນໄດ້, ສະດວກສະບາຍໃນການໄປມາຫາສູ່ກັນຕະຫຼາດ ໃນລະດັບຫຼາຍ ມີຄ່າສະເລ່ຍ 3.80, ສິ່ງອຳນວຍຄວາມສະດວກທາງດ້ານສາທາລະນະສຸກ ໃນລະດັບຫຼາຍ ມີຄ່າສະເລ່ຍ 3.79, ໂຄງການໄດ້ສ້າງສຸກສາລາປະຈຳກຸ່ມບ້ານໃຫ້ 1 ຫຼັງ ໃນນັ້ນມີຫ້ອງ 4 ຫ້ອງນອນ 1 ຫ້ອງປະສູດ ພ້ອມທັງປະກອບອຸປະກອການແພດໃຫ້ 1 ຊຸດ. ແຕ່ເໜື່ອງຈາກວ່າປະຈຸບັນຍັງບໍ່ທັນມີແພດໄປປະຈຳເທື່ອ ແຕ່ເຖິງຢ່າງໃດກໍ່ຕາມ ເວລາມີການເຈັບເປັນ ປະຊາຊົນສາມາເຂົ້າມາປິ່ນປົວຢູ່ໂຮງໝໍເມືອງໄດ້ຢ່າງທັນເວລາ ຍ້ອນວາໄລຍະທາງແຕ່ບ້ານຫ້ວຍໂລ ຫາສຳນັກເມືອງ ມີພຽງແຕ່ 8 ກິໂລແມັດ ໃຊ້ເວລາພຽງ 10 ນາທີກໍ່ເຖິງສະຖານທີ່ບໍລິການແລ້ວ.

## 4. ວິພາກຜົນ

ສຶກສາການປ່ຽນແປງລັກສະນະການປະກອບອາຊີບພາຍຫຼັງມີການກໍ່ສ້າງເຂື່ອນ, ໄດ້ເລັ່ງໃສ່ໃນການສຶກສາການປ່ຽນແປງທາງດ້ານ, ອາຊີບ, ລາຍຮັບ-ລາຍຈ່າຍ, ລາຍການຊັບສິນ ຫຼື ຊັບສົມບັດຂອງຄອບຄົວເປັນຕົ້ນ, ອັນເນື່ອງມາຈາກ ການພັດທະນາໂຄງລ່າງກໍ່ໃຫ້ເກີດມີການປ່ຽນແປງລັກສະນະທາງສັງຄົມ, ເສດຖະກິດ ກໍ່ຄືວິຖີການດຳລົງຊີວິດກໍ່ປ່ຽນແປງໄປຕາມກົນໄກການຕະຫຼາດ, ຈາກການປ່ຽນແປງລັກສະນະການປະກອບອາຊີບ ໃນເມື່ອກ່ອນ ຈາກການເຮັດໄຮ່ເພື່ອປູກເຂົ້າບໍລິໂພກ ປ່ຽນແປງມາເປັນການປູກຫ້ຍາເພື່ອລ້ຽງສັດ ຂາຍເປັນສິນຄ້າ ມີຫຼາຍຄົນຫັນມາປະກອບອາຊີບ ຄ້າ-ຂາຍ, ເຊິ່ງວິຖີຊີວິດກໍ່ຍ່ອມແຕກຕ່າງກັນໄປຈາກເດີມ. ການປ່ຽນແປງການນຳໃຊ້ທີ່ດິນ ຈະເຫັນໄດ້ວ່າເກີດມີຮ້ານອາຫານ, ຮ້ານກິນດື່ມແຄມນ້ຳ, ບ້ານພັກກໍ່ເກີດຂຶ້ນຕາມມາ. ນອກຈາກນັ້ນ, ຍັງສັງເກດໄດ້ວ່າ ພາຍໃນບ້ານມີຮ້ານຂາຍອຸປະກອນ ແລະ ວັດຖຸສຳລັບການກໍ່ສ້າງຈຶ່ງເຮັດໃຫ້ເຮືອນທີ່ມີກອ້ງລ່າງ ໄດ້ກໍ່ເປັນເຮືອນສອງພື້ນ, ສ່ວນເຮືອນວິນລາຊັ້ນດຽວກໍ່ໄດ້ ມີການຕໍ່ເຕີມອອກທາງຂ້າງ ສິ່ງເຫຼົ່ານີ້ສະແດງໃຫ້ເຫັນມີການປ່ຽນແປງ ອັນເນື່ອງມາຈາກມີການພັດທະນາພື້ນຖານໂຄງລ່າງ ເຊິ່ງສອດຄ່ອງກັບ ຜົນຂອງການສຶກສາຂອງ ສົມສັກ,1994 ໄດ້ສະຫຼຸບວ່າ ປັດໄຈທີ່ເຮັດໃຫ້ການປ່ຽນແປງທາງສັງຄົມ ແລະ ວັດທະນະທຳໃນຊຸມຊົນແບ່ງໄດ້ເປັນ 2 ປັດໄຈໃຫຍ່ໆ ໄດ້ແກ່: ປັດໄຈພາຍໃນ ແລະ ປັດໃຈພາຍນອກ, ປັດໄຈພາຍໃນ ໝາຍເຖິງ ປັດໄຈທີ່ກໍ່ໃຫ້ເກີດການປ່ຽນແປງທາງສັງຄົມ ແລະ ວັດທະນະທຳພາຍໃນສັງຄົມ ເຊິ່ງສາມາດເບິ່ງໄດ້ 2 ລັກສະນະຄື:1) ປັດໄຈທີ່ສະແດງອອກຢ່າງເປີດເຜີຍ ຫຼື ຕັ້ງໃຈກະທຳການປ່ຽນແປງ ໄດ້ແກ່ຂະບວນການເຄື່ອນໄຫວທາງສັງ

ຄົມ ການປະດິດສິ່ງໃໝ່ໆ ການວາງແຜນທາງສັງຄົມ ການກະທຳຂອງບຸກຄົນໃນສັງຄົມ ເຊັ່ນ: ຜູ້ນຳຂະບວນ ເປັນຕົ້ນ. 2) ປັດໄຈທີ່ບໍ່ສະແດງອອກຢ່າງເປີດເຜີຍ ຫຼື ຕັ້ງໃຈ ໄດ້ແກ່ ຄວາມຕຶງຄຽດພາຍໃນລະບົບສັງຄົມ ແລະ ການຂາດແຄນຊັບພະຍາກອນ ເຮັດໃຫ້ມີຜົນກະທົບຕໍ່ການປ່ຽນແປງທາງສັງຄົມ ເປັນຕົ້ນ. ປັດໄຈພາຍນອກ ເປັນປັດໄຈທີ່ເກີດຂຶ້ນພາຍນອກຂອງສັງຄົມ ເຊິ່ງມີ ການປ່ຽນແປງລັກສະນະປະຊາກອນ ໄດ້ແກ່ ການຍ້າຍຖິ່ນຂອງປະຊາກອນ ຄວາມແຕກຕ່າງຂອງອົງປະກອບຂອງປະຊາກອນ ເຊັ່ນ: ອາຍຸ, ເພດ ແລະ ການສຶກສາ ເປັນຕົ້ນ. ຈາກການປ່ຽນແປງດັ່ງກ່າວນັ້ນ ສາມາດນຳແນວຄິດ ທິດສະດີ ການຮັບສິ່ງໃໝ່ (Inovation theory)ຂອງ Roger (1968) ທີ່ໄດ້ເວົ້າເຖິງຂະບວນການຍອມຮັບ ສິ່ງໃໝ່ 5 ຂັ້ນຕອນ ມາອະທິບາຍໄດ້ ໂດຍຍົກຕົວຢ່າງຂອງປະກົດການ ຫັນປ່ຽນລະບົບການຜະລິດຈາການເຮັດໄຮ່ປູກເຂົ້າຫັນມາເຮັດສວນຫ້ຍາ ໃນເມື່ອປະຊາຊົນໄດ້ຮັບຂໍ້ມູນຂ່າວສານກ່ຽວກັບການປູກຫ້ຍາລ້ຽງສັດ ທີ່ສາມາດຂາຍເປັນສິນຄ້າໄດ້ ໂດຍແຫຼ່ງຂ່າວທີ່ໄດ້ແມ່ນອາດມາຈາກປະຊາຊົນຢູ່ທ້ອງຖິ່ນອື່ນ ເໜັ້ນໃສ່ການເຮັດສວນຫ້ຍາ ລວມທັງມີພໍ່ຄ້າຈາກພາຍນອກເຂົ້າມາຊັກຊວນໃຫ້ປູກ ຈຶ່ງເຮັດໃຫ້ປະຊາຊົນ ເກີດຄວາມສົນໃຈ ແລະສຶກສາລາຍລະອຽດຂອງ ຜົນໄດ້-ຜົນເສຍ ທີ່ໄດ້ຈາກການເຮັດສວນຫ້ຍາ, ຈາກນັ້ນ ຈຶ່ງທຳການປະເມີນຜົນໄດ້ວ່າການເຮັດສວນຫຍ້າແມ່ນໃຊ້ໄລຍະເວລາຍາວຄ້າຍຄືກັບການປູກເຂົ້າ ແຕ່ຖ້າໃຫ້ຜົນຜະລິດແລ້ວ ແມ່ນຈະໃຫ້ຜົນຕອບແທນສູງ ດ້ານໜຶ່ງອີກຍັງສາມາດໃຊ້ພື້ນທີ່ດັ່ງກ່າວຢ່າງຖາວອນ ແລະ ຍັງມີພໍ່ຄ້າໃຫ້ການສະໜັບສະໜູນ ແນວພັນຕື່ມອີກ ແລະ ຍັງຊ່ວຍທາງດ້ານລະບົບການຕະຫຼາດໃຫ້ ເຊິ່ງເປັນຜົນດີຕໍ່ກັບປະຊາຊົນ ແລະ ເຮັດໃຫ້ປະຊາຊົນ ເລີ້ມຫັນມາປູກຫ້ຍາລ້ຽງສັດຫຼາຍຂຶ້ນ ສະນັ້ນປະກົດການຂອງການປ່ຽນແປງ ທີ່ເກີດຂຶ້ນດັ່ງກ່າວນັ້ນ ເກີດຂຶ້ນໄດ້ກໍ່ເນື່ອງມາຈາກ ມີປັດໃຈທີ່ເຮັດໃຫ້ ປະຊາຊົນເກີດການຍອມຮັບ ເຊິ່ງມີຢູ່ຫຼາຍດ້ານດ້ວຍກັນ ປະກົດການທຳອິດເປັນປັດໄຈຄວາມຕ້ອງການໃນເລື້ອງການປ່ຽນແປງ ຂອງປະຊາຊົນເອງທີ່ຕ້ອງການລາຍໄດ້ເພີ້ມຂຶ້ນ ເມື່ອຮັບຮູ້ວ່າການປູກຫຍ້າ ຈະນຳມາເຊິ່ງຄ່າຕອບແທນສູງ ເຮັດໃຫ້ປະຊາຊົນໄດ້ຮັບຄວາມເພິ່ງພໍໃຈຢ່າງສູງ ຈາກຜົນການປ່ຽນແປງ (ປັດໄຈໄດ້ຮັບຄວາມເພິ່ງພໍໃຈ) ແລະ ທີ່ສຳຄັນປະຊາຊົນໄດ້ເຫັນຕົວຢ່າງຈາກບ່ອນອື່ນ ວ່າພວກເຂົາໄດ້ຮັບຄ່າຕອບແທນສູງຈາກການປູກໄມ້ໃຫ້ໝາກ (ປັດໄຈການສາທິດຜົນປະໂຫຍດ) ລວມເຖິງການປູກຫ້ຍາ ຍັງເປັນການນຳໃຊ້ພື້ນທີ່ ທຳການກະເສດແບບຖາວອນໄດ້ ເຊິ່ງສອດຄ່ອງກັບແນວທາງຂອງພັກ ແລະ ລັດ ທີ່ຫຼຸດຜ່ອນການເຂົ້າໄປບຸກບຸກພື້ນທີ່ປ່າສະຫງວນ (ປັດໄຈເຂົ້າກັນໄດ້ກັບວັດທະນະທຳທີ່ມີຢູ່) ແລະຍັງມີພໍ່ຄ້າ ເຂົ້າມາຕິດຕໍ່ຄ້າຂາຍກັບຄົນຢູ່ພາຍໃນບ້ານ ແລະມີການຊັກຊວນໃຫ້ປະຊາຊົນປູກຫຍ້າລ້ຽງສັດຫຼາຍຂຶ້ນ (ປັດໄຈຜູ້ນຳໃນການປ່ຽນແປງ) ໂດຍຈະໃຫ້ແນວພັນ ພ້ອມທັງແນະນຳວິທີການປູກ ແລະ ການດູແລຮັກສາ ພ້ອມທັງການເກັບກ່ຽວ (ປັດໄຈຕົ້ນທຶນການປ່ຽນແປງ) ຈຶ່ງເຮັດໃຫ້ປະຊາຊົນເຂົ້າໃຈເຖິງ ໃນເມື່ອຕົ້ນທຶນຂອງການລົງທຶນຕ່ຳຄ່າຕອບແທນສູງ ອາດຈະໃຊ້ເວລາເທົ່າກັນກັບການປູກເຂົ້າແຕ່ຈະໃຫ້ຜົນດີແກ່ຕົວຂອງເຂົາເຈົ້າເອງ ຈຶ່ງເຮັດໃຫ້ປະຊາຊົນຫັນມາປູກຫຍ້າລ້ຽງສັດກັນຫຼາຍຂຶ້ນ, ສາມາດກຳນົດແນວທາງໃນການວາງແຜນການພັດທະນາໃນອານາຄົດສະແດງໃຫ້ເຫັນຜົນດີ, ຜົນເສຍ ຫຼື ມີຜົນກະທົບເຊີງລົບຕໍ່ປະຊາຊົນໜ້ອຍທີ່ສຸດ. ນອກຈາກນັ້ນ ຍັງເລັ່ງໃສ່ການສຶກສາ ຍານພາຫະນະຂອງຄອບຄົວ, ເຄື່ອງໃຊ້ໄຟຟ້າ, ລວມທັງເຄື່ອງມືໃນການສື່ສານ ເປັນຕົ້ນເຊິ່ງຜົນຂອງການສຶກສາພົບວ່າການປ່ຽນແປງລັກສະນະທາງກາຍຍະພາບນັ້ນໂດຍລວມແລ້ວມີອົງປະກອບທີ່ບໍ່ແຕກຕ່າງກັບໂຄງການກໍ່ສ້າງພື້ນຖານໂຄງລ່າງອື່ນທີ່ມີລັກສະນະ ແລະ ໂຄງການປະກອບ ທີ່ເປັນລັກສະນະດຽວກັນ, ເມື່ອເວົ້າເຖິງການພັດທະນາ ແມ່ນ ເວົ້າເຖິງການປ່ຽນແປງ ລັກສະນະທາງກາຍຍະພາບ, ເຊິ່ງບໍ່ສາມາດປະສະຈາກໄດ້ ຜົນກະທົບຕໍ່ສິ່ງແວດລ້ອມ - ສັງຄົມ ແລະ ທຳມະຊາດ, ຜົນກະທົບດັ່ງກ່າວປະກອບມີ 3 ດ້ານຫຼັກ ຄື: 1. ການທົດແທນຄ່າເສຍຫາຍ, 2. ການຈັດສັນ-ຍົກຍ້າຍປະຊາຊົນ, 3. ການຟື້ນຟູຊີວິການເປັນໃຫ້ແກ່ປະຊາຊົນ. ການທົດແທນຄ່າເສຍຫາຍທາງດ້ານຊັບສິນລວມຂອງບ້ານ ເຊັ່ນ: ຫ້ອງການບ້ານ 1 ຫຼັງ, ໂຮງຮຽນປະຖົມສົມບູນ 5 ຫ້ອງ, ຫ້ອງຄູ 1 ຫ້ອງ, ວັດ 1 ຫຼັງພ້ອມດ້ວຍອາຣາມ, ກຸດີ ຫໍແຈກ 1 ຫຼັງ ແລະ ຫໍກອງ 1

ຫຼັງ, ນອກຈາກນັ້ນການທົດແທນຄ່າເສຍຫາຍ ທີ່ຖືກຜົນກະທົບຜົນລະປູກໄດ້ທົດແທນເປັນເງິນສົດ. ການຈັດສັນ-ຍົກຍ້າຍ ໂຄງການໄດ້ປຸກສ້າງເຮືອນ ປະກອບມີ 2 ປະເພດ ຄື ເຮືອນວິນລາຊັ້ນດຽວ ແລະ ເຮືອນໄມ້ສອງພື້ນ ແຕ່ລະປະເພດ ມີ 3 ຂະໜາດ ຄື: 50 ມ$^2$, 65 ມ$^2$ ແລະ 85 ມ$^2$, ຈໍານວນ 134 ຫຼັງໃນນັ້ນ, ເຮືອນວິນລາຊັ້ນດຽວ 87 ຫຼັງ ແລະ ເຮືອນ ໄມ້ສອງພື້ນ 47 ຫຼັງ. ການຟື້ນຟູຊີວິດການເປັນຢູ່ໃຫ້ແກ່ປະຊາຊົນ ໂຄງການໄດ້ສົ່ງເສີມທຶນໃຫ້ແກ່ປະຊາຊົນ ເພື່ອປະກອບອາຊີບ ຈໍານວນ 10,000,000 ກີບ ຕໍ່ຄອບຄົວ.

ການສຶກສາຄວາມເພິ່ງພໍໃຈຂອງປະຊາຊົນບ້ານຫ້ວຍໂລ ເມືອງປາກອູ ແຂວງຫຼວງພະບາງ ເຊິ່ງປະກອບມີ 4 ດ້ານ ຄື: ດ້ານຜົນປະໂຫຍດ, ດ້ານລະບຽບການ, ດ້ານການອານຸລັກ, ດ້ານພື້ນຖານໂຄງລ່າງ ປະຊາຊົນມີຄວາມ.ເພິ່ງພໍໃຈຫຼາຍທີ່ສຸດ ແມ່ນດ້ານພື້ນຖານໂຄງລ່າງສະເລ່ຍ 3.85 ລະດັບຫຼາຍ, ຮອງລົງມາແມ່ນດ້ານຜົນປະໂຫຍດ ສະເລ່ຍ 3.70 ລະດັບຫຼາຍ, ດ້ານລະບຽບການ ສະເລ່ຍ 3.64 ລະດັບຫຼາຍ ປະຊົນຊົນມີຄວາມເພິ່ງພໍໃຈໜ້ອຍທີ່ສຸດແມ່ນ ດ້ານການອານຸລັກ ສະເລ່ຍ 3.50 ລະດັບກາງ, ເມື່ອມາປຽບທຽບ ກັບກັບການສຶກສາ Bouangen (2020) ຜົນຂອງການຍົກຍ້າຍບ້ານຂອງປະຊາຊົນ ເມືອງນາແລ ແຂວງ ຫຼວງນໍ້າທາ ເຊິ່ງປະຊາຊົນສ່ວນໃຫຍ່ມີຄວາມເພິ່ງພໍໃຈຂອງປະຊາຊົນດ້ານຜົນປະໂຫຍດ-ເສດຖະກິດ ສະເລ່ຍ 3.14 ລະດັບກາງ ຍັງສອດຄ່ອງກັບຜົນການສຶກສາຂອງ Nongnud (1998) ຄວາມເພິ່ງພໍ່ໃຈ ຂອງປະຊາຊົນບ້ານຫ້ວຍໂລ ຍັງຊີ້ໃຫ້ເຫັນ ຄຸນລັກສະນະທາງອາລົມຈິດໃຈ ຫຼື ທັດສະນະຄະຕິຂອງບຸກຄົນ ທີ່ມີຕໍ່ວຽກງານທີ່ເຮັດຢູ່ ເຊິ່ງປະກອບດ້ວຍປັດໄຈທີ່ສໍາຄັນ 2 ຢ່າງຄື: ປັດໄຈທໍາອິດ, ເປັນປັດໃຈທີ່ກ່ຽວຂ້ອງກັບຄວາມເພິ່ງພໍໃຈ ໃນຫົວຂໍ້ວຽກງານມີ 5 ດ້ານຄື: ວຽກທີ່ເຮັດ, ຄ່າຈ້າງ ແລະ ໂອກາດທີ່ກ້າວໜ້າ, ຄວາມໝັ້ນຄົງ ແລະ ເພື່ອນຮ່ວມງານ, ສ່ວນປັດໃຈທີ່ສອງ ທີ່ກ່ຽວຂ້ອງກັບຄວາມເພິ່ງພໍໃຈ ດ້ານອາລົມຈິດໃນວຽກງານມີ 3 ດ້ານຄື: ຄວາມເພິ່ງພໍໃຈທີ່ເປັນແຮງຈູງໃຈພາຍໃນກ່ຽວກັບວຽກ, ຄວາມເພິ່ງພໍໃຈເມື່ອມີຄວາມກ້າວໜ້າໃນດ້ານການເຮັດວຽກ. ສອດຄ່ອງກັບ Nongnud (1998) ຄວາມເພິ່ງພໍໃຈ ໝາຍເຖິງ ຄຸນລັກສະນະທາງອາລົມຈິດໃຈ ຫຼື ທັດສະນະຄະຕິຂອງບຸກຄົນ ທີ່ມີຕໍ່ວຽກງານທີ່ເຮັດຢູ່ ເຊິ່ງປະກອບດ້ວຍປັດໃຈທີ່ສໍາຄັນ 2 ຢ່າງຄື: ປັດໃຈທໍາອິດເປັນປັດໃຈທີ່ກ່ຽວຂ້ອງກັບຄວາມເພິ່ງພໍໃຈ ໃນບໍລິບົດຂອງວຽກງານມີ 5 ດ້ານຄື: ວຽກທີ່ເຮັດ, ຄ່າຈ້າງ ແລະ ໂອກາດທີ່ກ້າວໜ້າ, ຄວາມໝັ້ນຄົງ ແລະ ເພື່ອນຮ່ວມງານ, ສ່ວນປັດໃຈທີສອງທີ່ກ່ຽວຂ້ອງກັບຄວາມເພິ່ງພໍໃຈ ດ້ານອາລົມຈິດໃນວຽກງານມີ 3 ດ້ານຄື: ຄວາມເພິ່ງພໍໃຈທີ່ເປັນແຮງຈູງໃຈພາຍໃນກ່ຽວກັບວຽກ, ຄວາມເພິ່ງພໍໃຈເມື່ອມີຄວາມກ້າວໜ້າໃນດ້ານການເຮັດວຽກ ແລະ ກ່ຽວກັບການເຮັດວຽກທົ່ວໆໄປ.

## 5. ສະຫຼຸບ

ຈາກການສຶກສາຊີວິດການເປັນຢູ່ຂອງປະຊາຊົນບ້ານຫ້ວຍໂລ,ເມືອງປາກອູ ກ່ອນການຍົກຍ້າຍ ແລະ ພາຍຫຼັງມີການຍົກຍ້າຍ, ເຮັດໃຫ້ເກີດມີການປ່ຽນແປງ ໃນຫຼາຍດ້ານຕາມມາ ແລະ ສິ່ງໜຶ່ງທີ່ເຮັດໃຫ້ພວກເຮົາຮັບຮູ້ໄດ້ເຖິງການປ່ຽນແປງ ຄືໂຄງສ້າງ ແລະ ໂຄງປະກອບເສດຖະກິດພາຍໃນບ້ານ ລວມທັງຊັບສິນຂອງປະຊາຊົນທີ່ມີຢູ່ໃນບ້ານ. ນອກຈາກຍັງມີການປ່ຽນແປງລັກສະນະການນໍາໃຊ້ທີ່ດິນ ເຮັດການຜະລິດ ຮູບແບບການຜະລິດ ມີການປ່ຽນແປງໄປຈາກການເຮັດໄຮ່ແບບໝູນວຽນ ກ່ອນປີ 2016 ແລະ ຫຼັງປີ 2022 ສິ່ງທີ່ເຫັນມີການປ່ຽນແປງຫຼາຍ ແລະ ພົ້ນເດັ່ນແມ່ນເນື້ອທີ່ປູກຫຍ້າພັນປັບປຸງ ເພື່ອລ້ຽງສັດ ແລະ ປະຊາຊົນໄດ້ຮັບທຶນສົ່ງເສີມຈາກໂຄງການກໍ່ສາງເຂື່ອນໄຟຟ້ານໍ້າອູ ຈໍານວນ 10,000,000 ກີບ ຕໍ່ຄອບຄົວ ເພື່ອມາເຮັດກິດຈະກໍາສົ່ງເສີມອາຊີບລ້ຽງງົວ ເຊິ່ງຊື້ງົວໄດ້ 2 ໂຕ, ເນື່ອງຈາກກິດຈະກໍາການລ້ຽງງົວ ເປັນກິດຈະກໍາທີ່ພົ້ນເດັ່ນຂອງປະຊາຊົນບ້ານຫ້ວຍໂລ. ນອກຈາກນັ້ນ, ຍັງເຫັນການປ່ຽນແປງລັກສະນະຮູບແບບເຮືອນ, ລາຍການຊັບສິນ, ສິ່ງອໍານວຍຄວາມສະດວກພາຍໃນຄອບຄົວ ເຊັ່ນ: ພາຫະນະ, ເຄື່ອງໃຊ້ໄຟຟ້າ ທີ່ທັນສະໄໝ. ການສຶກສາຄວາມເພິ່ງພໍໃຈຂອງປະຊາຊົນໃນການຈັດສັນ-ຍົກຍ້າຍບ້ານຫ້ວຍໂລ, ເມືອງປາກອູ ແຂວງຫຼວງພະບາງ ໂດຍການສຶກສາປະເມີນຄວາມເພິ່ງພໍໃຈ 4 ດ້ານ ຄື ດ້ານຜົນປະໂຫຍດ, ດ້ານລະບຽບການ, ດ້ານການອານຸລັກ, ດ້ານພື້ນຖານໂຄງລ່າງ ປະຊາຊົນສ່ວນໃຫຍ່ແມ່ນມີຄວາມເພິ່ງດ້ານພື້ນຖານໂຄງລ່າງຫຼາຍກວ່າດ້ານອື່ນ

ມີຄ່າສະເລ່ຍ 3.85, ດ້ານລະບຽບການ ມີຄ່າສະເລ່ຍ 3.64, ດ້ານການອານຸລັກ 3.50. ຈາກຜົນການປະເມີນຄວາມເພິ່ງພໍໃຈປະຊາຊົນມີຄວາມພໍໃຈສູງແມ່ນດ້ານພື້ນຖານໂຄງລ່າງ ເຊິ່ງໝາຍເຖິງການດໍາລົງຊີວິດຂອງປະຊາ ຊົນພາຍໃນບ້ານ ໃນການເຂົ້າເຖິງສິ່ງອໍານວຍຄວາມສະດວກຕ່າງໆມີຄວາມສະດວກຫຼາຍຂຶ້ນ, ແຕ່ເຖິງຢ່າງໃດກໍ່ຕາມມີບາງດ້ານທີ່ປະຊາຊົນມີຄວາມເພິ່ງພໍໃຈໃນລະດັບຄະແນນສະເລ່ຍຍັງຕໍ່າ ຄືດ້ານການອານຸລັກໝາຍວ່າປະຊາຊົນໄດ້ເຫັນຄວາມສໍາຄັນກັບການອານຸລັກຂອງສິ່ງແວດລ້ອມຄຽງຄູ່ກັບການພັດທະນາຊີວິດຂອງເຂົາເຈົ້າໄປພ້ອມກັນ.

## 6. ຂໍ້ຂັດແຍ່ງ

ພວກຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ

ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບປັບປຸງ. (2012). ເລກທີ 29/ສພຊ ລົງວັນທີ 18 ທັນວາ 2012.

ຄະນະກໍາມະທິການເຂື່ອນໂລກ. (2000). ການເຮັດໃຫ້ສາຍນໍ້າ ແລະ ຊີວິດການເປັນຢູ່ມີຄວາມຍືນຍົງ.

ສະພາແຫ່ງຊາດ. (2021). ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX.

ສົມສີ ຍໍພັນໄຊ. (2002). ຄູ່ມືການສອນວິຊາຄວາມຮູ້ພື້ນຖານກ່ຽວກັບສິ່ງແວດລ້ອມ, ຄະນະປ່າໄມ້ ມະຫາວິທະຍາໄລແຫ່ງຊາດ.

ພະແນກຊັບພະຍາກອນ ແລະ ສິ່ງແວດລ້ອມ ແຂວງຫຼວງພະບາງ. (2020). ບົດລາຍງານສະພາບສິ່ງແວດລ້ອມ ຂອງ ແຂວງຫຼວງພະບາງ.

Anek. (1993). Community culture gives importance to the wisdom of the villagers which means the thought system of the villagers.

Angru therton. (1990). Local distribution and class differences in rural areas In the Kingdom of Thailand Approaches to interest and acceptance of change.

Bouangen. (2020). The result of the relocation of people's homes in Nale District, Luang Namtha Province Faculty of Agriculture and Forest Resources, Suphanuvong University.

Jamali. (1995). Change requires a change leader with persuasion and presence

Kanjana. (1990). Communities are interrelated and constantly evolving. If one element changes, it will affect other elements as well.

Laos government. (2016). Decree on Compensation and Relocation Allocation

Laos government. (2017). Lao National Environmental Standards

Sansai. (1999). Production system in the community that is related to the conservation of natural resources Nature and environment.

Saenpan et al. (1997). Development of the strength of villagers' organizations Khon

Sompong. (1998). The impact of infrastructure construction on high ground in northern Thailand, Chiang Mai, Social Research Institute, Chiang Mai University and planning. Khon Kaen: Khon Kaen University.

Somsak. (1994). Social and Cultural Change: A Study-Analytical Approach Khen, Research and Development Institute, Khon Khen University

Vinai. (1995). The deterioration of the quality of life and the change in the Thai way of life all stem from the same cause in the Kingdom of Thailand.Sukanya,1993. This concept of development affirms equality rights.